ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 20179 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 05 SEP 2018

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ່ 295/ນຍ, ລົງວັນທີ 04 ກັນຍາ 2017
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 531/ຍທຂ.ກຈພ ລົງວັນທີ 02/08/2018
- ອີງຕາມ ການເຫັນດີເປັນເອກະພາບຂອງຄະນະປະຈຳພັກກະຊວງປະຈຳເດືອນ ສິງຫາ, ຄັ້ງວັນທີ 24/08/2018

## ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ເພື່ອເປັນບ່ອນອີງ ໃນການ ຈັດຕັ້ງ ແລະ ເຄື່ອນໄຫວ ວຽກງານໂຍທາທິການ ແລະ ຂົນສົ່ງ ໃຫ້ມີປະສິດ ທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ສັງກັດໃນໂຄງປະກອບການຈັດຕັ້ງ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ວຽກງານໂຍທາທິການ ແລະ ຂົນສົ່ງ ຢູ່ໃນຂອບເຂດເມືອງ, ເທດສະບານ, ນະຄອນ ຂອງຕົນ.

## ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄ້ວາ, ເຊື່ອມຊຶມ ແນວທາງນະໂຍບາຍຂອງ ພັກ ແລະ ລັດຖະບານ, ແຜນຍຸດທະສາດຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ແຂວງ, ນະຄອນຫຼວງ ກ່ຽວກັບວຽກງານໂຍທາທິການ ແລະ ຂົນສົ່ງໃຫ້ເລິກເຊິ່ງ;
2. ຈັດຕັ້ງ, ຜັນຂະຫຍາຍ ແຜນຍຸດທະສາດ ກ່ຽວກັບ ວຽກງານໂຍທາທິການ ແລະ ຂົນສົ່ງ ໃຫ້ປະກົດຜົນເປັນຈິງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ;
3. ສ້າງແຜນການ, ແຜນງານ ແລະ ໂຄງການ ໃຫ້ສອດຄ່ອງກັບແຜນຍຸດທະສາດການພັດທະນາວຽກງານໂຍທາທິການ ແລະ ຂົນສົ່ງ ຢູ່ ເມືອງ, ເທດສະບານ, ນະຄອນ ໂດຍຜ່ານການເຫັນດີ ຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລ້ວນຳສະເໜີ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງເພື່ອພິຈາລະນາ;
4. ຈັດຕັ້ງແຜນການພັດທະນາ ໄລຍະສັ້ນ ແລະ ໄລຍະກາງ ວຽກງານໂຍທາທິການ ແລະ ຂົນສົ່ງໃນຂອບເຂດເມືອງ, ເທດສະບານ, ນະຄອນ ຂອງຕົນ ໂດຍອີງໃສ່ ແຜນການພັດທະນາວຽກງານໂຍທາທິການ ແລະ ຂົນສົ່ງ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
5. ຈັດຕັ້ງ ແລະ ຄຸ້ມຄອງ ວຽກງານໂຍທາທິການ ແລະ ຂົນສົ່ງ ຕາມ ກົດໝາຍ ແລະ ລະບຽບການ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ, ກຳນົດໝາຍ, ມາດຕະຖານ ເຕັກນິກ ແລະ ລາຄາຫົວໜ່ວຍກໍ່ສ້າງທີ່ກະຊວງໄດ້ກຳນົດ ໃນຂອບເຂດເມືອງ, ເທດສະບານ, ນະຄອນ ຂອງຕົນ ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງ;
6. ຄຸ້ມຄອງ ທາງຫຼວງເມືອງ ແລະ ທາງຊົນນະບົດ, ພ້ອມທັງ ຈັດຕັ້ງນຳພາ ປະຊາຊົນ ປະກອບທຶນຮອນ ແລະ ແຮງງານເຂົ້າໃນການ ກໍ່ສ້າງ, ບົວລະບັດຮັກສາ ແລະ ສ້ອມແປງ ທາງຫຼວງເມືອງ, ທາງຊົນນະບົດ, ຖະໜົນ, ຮ່ອງລະບາຍນ້ຳ, ອະນາໄມແຄມທາງ ແລະ ສະຖານທີສາທາລະນະອື່ນໆ ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ;
7. ເກັບກຳສະຖິຕິ ແລະ ລາຍງານ ສະພາບທາງຫຼວງແຫ່ງຊາດ, ທາງຫຼວງແຂວງ, ທາງຫຼວງເມືອງ, ທາງຊົນນະບົດ, ການເຊາະເຈື່ອນຂອງຕະຝັ່ງ ທີ່ຜ່ານເມືອງ, ເທດສະບານ, ນະຄອນ ຂອງຕົນ ເປັນຕົ້ນໄມ້ລົ້ມທັບທາງ, ທາງເຈື່ອນ, ຕະຝັ່ງເຈື່ອນ ເພື່ອລາຍງານ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຊອກວິທີແກ້ໄຂໃຫ້ທັນການ;
8. ເກັບກຳ ບັນຊີ ຈຳນວນປ້າຍຈາລະຈອນ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຖະໜົນໃນເມືອງ, ເທດສະບານ, ນະຄອນ ຂອງຕົນ, ສະພາບການຈອດລົດ, ສະຖານທີ່ຈອດລົດ ຕາມ ທາງຫຼວງ, ຕາມຕະຫຼາດ ແລະ ສະຖານທີ່ສາທາລະນະ, ເກັບກຳບັນຊີ ສະຖິຕິ ຍານພາຫະນະ ທຸກປະເພດ ແລະ ການຂົນສົ່ງ ທາງບົກ-ທາງນ້ຳ ລວມທັງສະມາຄົມຂົນສົ່ງ ໃນຂອບເຂດເມືອງ, ເທດສະບານ, ນະຄອນ ຂອງຕົນ;
9. ຄຸ້ມຄອງ ແລະ ກວດກາ ຢ່າງເປັນປົກກະຕິ ກ່ຽວກັບ ການປຸກສ້າງ ໂດຍອີງໃສ່ ລາຄາຫົວໜ່ວຍ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ກວດຜ່ານເອກະສານ ອະນຸຍາດປຸກສ້າງຕາມຄວາມຮັບຜິດຊອບຂອງຕົນ ແລ້ວລາຍງານໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
10. ຄົ້ນຄ້ວາ ວາງແຜນຜັງ ບ້ານ ແລະ ກຸ່ມບ້ານ, ຈັດສັນຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດຂອງຕົວເມືອງ, ເທດສະບານ, ນະຄອນ ປົກປັກຮັກສາ ສິ່ງແວດລ້ອມ, ປະສານສົມທົບກັບ

ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຊຸກຍູ້ປະຊາຊົນ ເພື່ອຄຸ້ມຄອງ ແລະ ປົກປັກຮັກສາ ສະໜາມບິນ, ວັດຖຸປະກອບສື່ສານການບິນ ແລະ ລະບົບນ້ຳປະປາ ໃນຂອບເຂດເມືອງ, ເທດສະບານ, ນະຄອນ ຂອງຕົນ;

11. ຂຶ້ນແຜນ ກຳນົດ, ສຶກສາອົບຮົມ, ບຳລຸງ, ກໍ່ສ້າງ, ບັນຈຸ, ສັບຊ້ອນ, ຍົກຍ້າຍ, ຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ໃນຄວາມຮັບຜິດຊອບຂອງຕົນ ຕາມນະໂຍບາຍ ຂອງພັກ ແລະ ລັດ ໂດຍປະສານສົມທົບກັບ ອົງການປົກຄອງເມືອງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
12. ສະຫຼຸບສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ຢ່າງເປັນປົກກະຕິ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

### ມາດຕາ 4 ຂອບເຂດສິດ

1. ສະເໜີ ປັບປຸງ, ສ້າງຕັ້ງ ຫຼື ລົບລ້າງ ກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ໃນເມື່ອເຫັນວ່າມີຄວາມຈຳເປັນ ຫລື ບໍ່ສອດຄ່ອງ;
2. ປະສານສົມທົບກັບ ຂະແໜງຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ບັນດາຫ້ອງການອ້ອມຂ້າງເມືອງ, ເທດສະບານ, ນະຄອນ, ບ້ານ, ເພື່ອປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງຕົນ ໃຫ້ສຳ ເລັດຜົນ;
3. ສະເໜີ ປັບປຸງ, ກົດໝາຍ, ລະບຽບການ, ກຳນົດໝາຍ ແລະ ມາດຕະຖານ ເຕັກນິກ ກ່ຽວກັບວຽກງານໂຍທາທິການ ແລະ ຂົນສົ່ງ ທີ່ເຫັນວ່າບໍ່ສອດຄ່ອງ;
4. ລາຍງານສະພາບການ ກ່ຽວຂ້ອງກັບວຽກງານ ໂຍທາທິການ ແລະ ຂົນສົ່ງ ໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
5. ນຳໃຊ້ ງົບປະມານ, ຍານພາຫະນະ, ກົນຈັກ ແລະ ວັດຖຸປະກອນ ຕາມການມອບໝາຍ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງລັດ;
6. ສະເໜີ ແຕ່ງຕັ້ງ, ຍ້ອງຍໍ, ຍົກຍ້າຍ, ສັບຊ້ອນ, ປະຕິບັດວິໃນ ລັດຖະກອນໃນຄວາມຮັບຜິດຊອບຂອງຕົນ ບົນພື້ນຖານ ເປັນເອກະພາບກັບ ອົງການປົກຄອງເມືອງ ແລະ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
7. ຈັດ ຫຼື ເຂົ້າຮ່ວມ ກອງປະຊຸມ ເພື່ອປຶກສາຫາລື ວຽກງານ ທີ່ກ່ຽວຂ້ອງກັບພາລະບົດບາດ ແລະ ໜ້າທີ່ຂອງຕົນ;
8. ຕັກເຕືອນ, ສັ່ງໂຈະຊົ່ວຄາວ ເພື່ອລາຍງານຂັ້ນເທິງ ຕໍ່ຜູ້ປຸກສ້າງ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງ ຫຼື ລະເມີດລະບຽບການປຸກສ້າງ;
9. ປະຕິບັດສິດອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 5 ໂຄງປະກອບກົງຈັກ

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ປະກອບມີ:

1. ໜ່ວຍງານ ບໍລິຫານ, ແຜນການ ແລະ ການເງິນ;
2. ໜ່ວຍງານ ຂົວທາງ
3. ໜ່ວຍງານ ເຄຫາ-ຜັງເມືອງ, ນ້ຳປະປາ;

4. ໜ່ວຍງານ ຂົນສົ່ງ;
5. ໜ່ວຍງານ ທາງນໍ້າ

ສໍາລັບການກໍານົດຈໍານວນໜ່ວຍງານ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ທີ່ລະບຸໄວ້ຂ້າງເທິງນັ້ນ ຖ້າຫາກວ່າຫ້ອງການຂອງເມືອງ, ເທດສະບານ, ນະຄອນ ໃດ ເຫັນວ່າ ບໍ່ມີເງື່ອນໄຂເໝາະສົມ ໂດຍສະເພາະໜ່ວຍງານທາງນໍ້າ ແລະ ໜ່ວຍງານເຄຫາ ແລະ ຜັງເມືອງ, ນໍ້າປະປາ ກໍ່ໃຫ້ໂຮມເອົາວຽກງານດັ່ງກ່າວເຂົ້າກັບໜ່ວຍງານທີ່ເໝາະສົມ ແລ້ວນໍາສະເໜີພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ພິຈາລະນາ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

1. ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຮັບຜິດຊອບ ຕໍ່ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ.

   - ໃນເວລາຕິດຂັດ ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຕ້ອງມອບສິດໃຫ້ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ;

2. ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຈໍານວນໜຶ່ງ ຊ່ວຍຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ໃນການຊີ້ນໍາຂົງເຂດວຽກງານໃດໜຶ່ງຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງຂົງເຂດວຽກງານທີ່ຕົນຊີ້ນໍາ;

   - ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ພາຍຫຼັງມາປະຈໍາການ.

3. ຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

   ສໍາລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບ ການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ ພ້ອມທັງມອບສິດ ແລະ ຄວາມຮັບຜິດຊອບ ໃຫ້ສົມເຫດສົມຜົນ.

ມາດຕາ 8 ແບບແຜນວິທີເຮັດວຽກ

1. ທຸກການເຄື່ອນໄຫວວຽກງານ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງເມືອງ ແລະ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
2. ເຮັດວຽກຢ່າງມີ ແຜນການ, ແຜນງານ ແລະ ໂຄງການລະອຽດ; ມີການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
3. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳ ເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ, ເກັບກຳສະພາບລວມ ແລະ ສະເພາະດ້ານ ຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ອົງການປົກຄອງເມືອງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວ ວຽກງານທາງລັດຖະການ.

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 16942/ຍທຂ ລົງວັນທີ 11/10/2012.

**ລັດຖະມົນຕີ**
**ກະຊວງໂຍທາທິການ ແລະ ຂົນສົ່ງ**

ດຣ ບຸນຈັນ ສິນທະວົງ